ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈໍາປາສັກ
ພະແນກກະສິກໍາ ແລະ ສິ່ງແວດລ້ອມ

ເລກທີ --2020/ກສຂ
ຈໍາປາສັກ, ວັນທີ 12.. ສິງຫາ 2026

## ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

ເຖິງ: ບັນດາທ່ານ ຜູ້ອໍານວຍການ ບໍລິສັດ ທີ່ດໍາເນີນທຸລະກິດການກໍ່ສ້າງເຄຫາສະຖານ ພາຍໃນ ແຂວງຈໍາປາສັກ ທີ່ນັບຖື.

ເລື່ອງ: ການເຂົ້າຮ່ວມການປະມູນ ໂຄງການວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ຈຸດສຸມສະໂນດ ເມືອງ ປະທຸມພອນ ແຂວງຈໍາປາສັກ ປະຈໍາປີ **2026.**

- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງ, ເລກທີ72/ສພຊ, ລົງວັນທີ 15 ທັນວາ 2015
- ອີງຕາມ ຄໍາແນະນໍາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຈັດຊື້ -ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ, ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
- ອີງຕາມ ຂໍ້ຕົກລົງຂອງຄະນະກໍາມະການປົກຄອງແຂວງ ຈໍາປາສັກ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງຈໍາປາສັກ, ເລກທີ 219/ຄປຂ.ຈສ, ລົງວັນທີ 12/03/2026
- ອີງຕາມ ແຈ້ງການຂອງພະແນກການເງິນ ແຂວງຈໍາປາສັກ, ເລກທີ 880/ກງຂ, ລົງວັນທີ 11 ມິຖຸນາ 2026 ເລື່ອງແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 ຂອງແຂວງຈໍາປາສັກ ຄັ້ງທີ II.

ພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງຈໍາປາສັກ ໄດ້ຮັບງົບປະມານການລົງທຶນຂອງລັດ ປະຈໍາປີ 2026 ຕາມແຈ້ງການຂອງພະແນກການເງິນແຂວງຈໍາປາສັກ, ສະບັບເລກທີ 880/ກງຂ, ລົງວັນທີ 11 ມິຖຸນາ 2026 ເລື່ອງແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 . ມີຈຸດປະສົງນໍາໃຊ້ທຶນດັ່ງກ່າວເຂົ້າໃນການກໍ່ສ້າງໂຮງຮຽນປະຖົມ ບ້ານນາທົ່ງ, ໂຮງຮຽນອະນຸບານ ບ້ານສະໂນດ ຈຸດສຸມສະໂນດ ເມືອງປະທຸມພອນ ລວມທັງໝົດມີ 2 ໂຄງການ ຄືດັ່ງນີ້:

1). ໂຄງການກໍ່ສ້າງໂຮງຮຽນ ປະຖົມ ບ້ານນາທົ່ງ 01 ຫລັງ, ຈຸດສຸມສະໂນດ ເມືອງປະທຸມພອນ

2). ໂຄງການກໍ່ສ້າງໂຮງຮຽນ ອະນຸບານ ບ້ານສະໂນດ 01 ຫລັງ, ຈຸດສຸມສະໂນດ ເມືອງປະທຸມພອນ

1. ບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໂຄງການດັ່ງກ່າວ ຕ້ອງມີໃບອະນຸຍາດດໍາເນີນທຸລະກິດດ້ານການກໍ່ສ້າງເຄຫາສະຖານ ປະຈໍາປີ 2026 ແລະ ຕິດຕໍ່ພົວພັນ, ສອບຖາມລາຍລະອຽດໄດ້ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງຈໍາປາສັກ(ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ)ຕາມໂມງລັດຖະການ;
2. ເອກະສານປະມູນ ສາມາດຊື້ໄດ້ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງຈໍາປາສັກ (ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ) ຕາມໂມງລັດຖະການ, ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ, ບໍລິສັດມາຊື້ໄດ້ 01 ຊອງຕໍ່ 01 ໂຄງການ ແລະ ຊອງປະມູນທີ່ຊື້ໄປແລ້ວແມ່ນບໍ່ສາມາດສົ່ງຄືນໄດ້;

3. ຜູ້ສົນໃຈເຂົ້າຮ່ວມການປະມູນ ສາມາດລົງກວດກາພາກສະໜາມຕົວຈິງດ້ວຍຕົນເອງ,
4. ເອກະສານປະມູນຕ້ອງສົ່ງເຖິງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ກ່ອນເວລາ 8:45 ໂມງ ຂອງວັນທີ 10 ກັນຍາ 2026 ຖ້າສົ່ງຊ້າກວ່າກຳນົດ ຈະບໍ່ຖືກພິຈາລະນາ, ເພາະຈະໄດ້ເປີດຊອງປະມູນເວລາ 9:00ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການ ແລະ ຜູ້ເຂົ້າຮ່ວມປະມູນ;
5. ຜູ້ປະມູນຕ້ອງປະກອບເອກະສານການປະມູນ ໃຫ້ຄົບຖ້ວນຕາມເງື່ອນໄຂ ແລະ ແບບຟອມເອກະສານການປະມູນ ແລະ ສົ່ງຊອງປະມູນກ່ອນເວລາກຳນົດເປີດຊອງປະມູນ;
6. ບໍລິສັດທີ່ເຂົ້າຮ່ວມການປະມູນ ຕ້ອງມີເງິນຄ້ຳປະກັນການປະມູນ ໃນມູນຄ່າບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີລາຄາປະມູນ, ຈະເຮັດເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ມອບແຊັກເງິນທີ່ໄດ້ຢັ້ງຢືນຈາກທະນາຄານກໍ່ໄດ້;

**ເງື່ອນໄຂໃນການເຂົ້າຮ່ວມການປະມູນລາຄາ ມີດັ່ງນີ້:**

1. ຕ້ອງມີໃບອະນຸຍາດດຳເນີນທຸລະກິດການກໍ່ສ້າງ, ໃບທະບຽນວິສາຫະກິດ, ໃບທະບຽນອາກອນເຊິ່ງເປັນບໍລິສັດທີ່ໄດ້ມອບພັນທະອາກອນໃຫ້ລັດຄົບຖ້ວນຖືກຕ້ອງຕາມລະບຽບກົດໝາຍ;
2. ເປັນບໍລິສັດທີ່ສາມາດລົງທຶນກ່ອນ 100% ໃນໂຄງການໃຫ້ສາເລັດ ແລະ ຕ້ອງມີໃບຢັ້ງຢືນຖານະການເງິນຈາກທະນາຄານ;
3. ແຈ້ງບັນຊີ ພາຫະນະກົນຈັກ, ວັດຖຸ ແລະ ອຸປະກອນ ທີ່ຈະນຳໃຊ້ເຂົ້າໃນໂຄງການໃຫ້ລະອຽດ ແລະ ຈະແຈ້ງສິ່ງໃດທີ່ເປັນຂອງຕົນເອງ (ມີເອກະສານຢັ້ງຢືນກຳມະສິດ) ແລະ ສິ່ງໃດແມ່ນໄດ້ມາຈາກການມອບສິດນຳໃຊ້ ຫຼື ເຊົ່າຈາກຜູ້ອື່ນ (ຕ້ອງມີເອກະສານການມອບສິດ ແລະ ສັນຍາເຊົ່າ ພ້ອມດ້ວຍທະບຽນພາຫານະກົນຈັກ ແລະ ອຸປະກອນດັ່ງກ່າວ)
4. ເປັນບໍລິສັດທີ່ມີປະສົບການດ້ານການກໍ່ສ້າງຢ່າງນ້ອຍ 03 ປີ, ມີຄຸນສົມບັດດີ, ມີຄວາມຈິ່ງໃຈໃນການຈັດຕັ້ງປະຕິບັດ ແລະ ຕ້ອງຮັບປະກັນການກໍ່ສ້າງໃຫ້ຖືກຕ້ອງຕາມມາດຖານເຕັກນິກການກໍ່ສ້າງຂອງ ສປປ ລາວ;
5. ບໍລິສັດຕ້ອງນຳສະເໜີ ລາຄາໃນທຸກໆລາຍການທີ່ມີໃນບໍລິມາດວຽກງານຂອງໂຄງການ ແລະ ມີລາຄາລວມແຕ່ລະລາຍການຖືກຕ້ອງຄົບຖ້ວນ;
6. ມູນຄ່າລາຄາໃນມື້ເປີດຊອງປະມູນບໍລິສັດທີ່ໄດ້ທີ 1 ແມ່ນຕ້ອງຜ່ານຄະນະກາມະການກວດກາ ບັນດາເງື່ອນໄຂ, ບັນດາເອກະສານອ້າງອີງຖືກຕ້ອງຄົບຖ້ວນ ຕາມຂໍ້ກຳນົດທຸກໆປະການຈຶ່ງວ່າຊະນະ ການປະມູນໄດ້;
7. ບໍລິສັດທີ່ໄດ້ປະກາດໃຫ້ເປັນຜູ້ຊະນະການປະມູນ, ຕ້ອງໄດ້ສ້າງບົດບັນທຶກສັນຍາຮ່ວມກັບເຈົ້າຂອງໂຄງການບໍ່ໃຫ້ກາຍ 15 ວັນ, ຕ້ອງມີເງິນຄ້ຳປະກັນສັນຍາ 10%, ຫຼັງຈາກເຊັນສັນຍາແລ້ວ ແລະ ຕ້ອງຈ່າຍເງິນບໍລິຫານ, ຕິດຕາມໂຄງການໃຫ້ເຈົ້າຂອງໂຄງການຕາມແຜນການເຄື່ອນໄຫວຕິດຕາມໃນແຕ່ລະຄັ້ງ, ເພື່ອນຳໃຊ້ເຂົ້າໃນການຕິດຕາມພາກສະໜາມ;
8. ສ່ວນການຊຳລະເງິນໂຄງການແມ່ນອີງໃສ່ສະພາອະນຸມັດງົບປະມານໃນແຕ່ລະປີ (ລາຍລະອຽດແມ່ນຢູ່ໃນສັນຍາ)

3/ດ ຫົວໜ້າພະແນກ

ບ່ອນສົ່ງ:

- ບັນດາບໍລິສັດດຳເນີນທຸລະກິດການກໍ່ສ້າງພາຍໃນແຂວງຈຳປາສັກ
- ຕິດຕໍ່ພົວພັນ: ຂະແໜງພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ(ພະແນກ ກສຂ)
  ທ.ຂັນແກ້ວ ວີໄລວົງ 020 98457 444
  ນ. ສົມປອງ ທານະໄຊ 020 22715 735

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງຈຳປາສັກ

Sayuth.

ປອ. ໄຊຍະສິດ ວິລະພັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ
ພະແນກກະສິກຳ ແລະ ສິ່ງແວດລ້ອມ

--2019
ເລກທີ ........../ກສຂ
ຈຳປາສັກ, ວັນທີ 12... ສິງຫາ 2026

## ເງື່ອນໄຂກຳນົດຄຸນວຸດທິຂອງຜູ້ປະມູນ

ຊື່ໂຄງການ : ໂຄງການກໍ່ສ້າງໂຮງຮຽນປະຖົມ ບ້ານນາທົ່ງ ຈຸດສຸມສະໂນດ ເມືອງປະທຸມພອນ
ທີ່ຕັ້ງໂຄງການ: ໂຮງຮຽນປະຖົມບ້ານນາທົ່ງ ຈຸດສຸມສະໂນດ ເມືອງປະທຸມພອນ

1. ຜູ້ປະມູນຕ້ອງມີນິຕິກຳ ໃນການດຳເນີນທຸລະກິດຖືກຕ້ອງຄົບຖ້ວນຄືດັ່ງນີ້:
   1.1 ໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ-ເຄຫາສະຖານ ປີ2026 ( ສະບັບສຳເນົາ)
   1.2 ໃບທະບຽນອາກອນ ປີ2026 ຫຼື ປີ2025 ( ສຳເນົາຕິດຄັດ )
   1.3 ໃບທະບຽນວິສະຫາກິດ ( ສຳເນົາຕິດຄັດ )
2. ແຈ້ງບັນຊີລາຍຊື່, ບຸກຄະລາກອນ, ຊີວະປະຫວັດ ແລະ ປະສົບການເຮັດວຽກຜ່ານມາ, ໃບປະກາດສະນີຍະບັດ, ໃບຢັ້ງຢືນວຽກຜ່ານມາ, ຕຳແໜ່ງທີ່ສຳຄັນຂອງບໍລິສັດ ເພື່ອປະກອບໃສ່ໃນໂຄງການນີ້:
   2.1 ຈຸດທີ່ຕັ້ງບໍລິສັດ , ໂທລະສັບ, ແຟັກ, Email ແລະ ອື່ນໆ.
   2.2 ບັນຊີລາຍຊື່ຄະນະຮັບຜິດຊອບໂຄງການ ຕ້ອງມີປະສົບການດ້ານການກໍ່ສ້າງທີ່ຄ້າຍຄືຢ່າງໜ້ອຍ 3 ປີຂຶ້ນໄປ ມີຜູ້ຈັດການພາກສະໜາມ, ວິຊາການ, ກຳມະກອນ.
   2.3 ໂຄງຮ່າງການຈັດຕັ້ງຂອງບໍລິສັດຮັບເໝົາສຳລັບໂຄງການ, ແຕ່ບໍ່ຊ້ຳກັບໂຄງການທີ່ຈັດຕັ້ງປະຕິບັດ.
3. ແຈ້ງບັນຊີ ພາຫະນະກົນຈັກ, ວັດຖຸ ແລະ ອຸປະກອນ ທີ່ຈະນຳໃຊ້ເຂົ້າໃນໂຄງການໃຫ້ລະອຽດ ແລະ ຈະແຈ້ງສິ່ງໃດທີ່ເປັນຂອງຕົນເອງ (ມີເອກະສານຢັ້ງຢືນກຳມະສິດ) ແລະ ສິ່ງໃດແມ່ນໄດ້ມາຈາກການມອບສິດນຳໃຊ້ ຫຼື ເຊົ່າຈາກຜູ້ອື່ນ (ຕ້ອງມີເອກະສານການມອບສິດ ແລະ ສັນຍາເຊົ່າ ພ້ອມດ້ວຍທະບຽນພາຫານະກົນຈັກ ແລະ ອຸປະກອນດັ່ງກ່າວ) ໃນນັ້ນ ພາຫະນະກົນຈັກອັນສຳຄັນ ທີ່ຈະຕ້ອງປະກອບໃສ່ການຈັດຕັ້ງປະຕິບັດໂຄງການຢ່າງໜ້ອຍ ຕ້ອງປະກອບມີດັ່ງນີ້:
   3.1 ດ້ານກົນຈັກ,ພາຫະນະ ຜູ້ປະມູນຕ້ອງແຈ້ງພາຫະນະ, ວັດຖຸອຸປະກອນຂອງຕົນ ເພື່ອຈະນຳໃຊ້ເຂົ້າໃສ່ໂຄງການນີ້ ຢ່າງໜ້ອຍຕ້ອງປະກອບມີ:

| | |
|---|---|
| - ລົດຂົນສົ່ງດິນຂະໜາດ 5-10 ມ3 | ຢ່າງໜ້ອຍ 2 ຄັນ |
| - ລົດຈົກດິນ (Back-ho) | ຢ່າງໜ້ອຍ 1 ຄັນ |
| - ພາຫະນະ ບໍລິຫານ ທີ່ເປັນລົດກະບະ | ຢ່າງໜ້ອຍ 1 ຄັນ |
| - ເຄື່ອງມືຈັກຕຳດິນ | ຢ່າງໜ້ອຍ 3 ເຄື່ອງ |
| - ວັດຖຸອຸປະກອນເຄື່ອງມືທີ່ຈຳເປັນອື່ນໆ | |

ຜູ້ຮັບເໝົາຕ້ອງໄດ້ສຳເນົາເອກະສານພາຫະນະດັ່ງກ່າວ ເພື່ອຢັ້ງຢືນຄວາມຖືກຕ້ອງທາງດ້ານກຳມະສິດໃຫ້ຕາມລະບຽບການ (ທະບຽນແຕ່ລະປະເພດ ຫຼື ສັນຍາຊື້ຂາຍ)

4. ສະແດງຖານະທາງດ້ານການເງິນຂອງບໍລິສັດ ວ່າສໍາລັບພຽງພໍໃນການຈັດຕັ້ງປະຕິບັດໂຄງການນີ້ ຫຼື ບໍ່ ເຊິ່ງຕ້ອງປະກອບມີຄື:

4.1 ປະກອບເອກະສານກ່ຽວກັບການເຄື່ອນໄຫວບັນຊີເງິນຝາກຂອງຕົນຢູ່ທະນາຄານ ຢ່າງໜ້ອຍ 3 ເດືອນຜ່ານມາ.

4.2 ບໍລິສັດຕ້ອງມີເງິນຈໍານວນບໍ່ຫຼຸດ 30% ຂອງມູນຄ່າໂຄງການທີ່ສະເໜີເຂົ້າຮ່ວມປະມູນ ຫຼື ໃບຢັ້ງຢືນການສະໜັບສະໜູນທາງດ້ານການເງິນເຂົ້າໃນການຈັດຕັ້ງປະຕິບັດໂຄງການນີ້ ຈາກທະນາຄານຫຼືນິຕິບຸກຄົນທີ່ໜ້າເຊື່ອຖືໄດ້ ຕ້ອງເປັນລາຍລັກອັກສອນຢ່າງຄັກແນ່;

5. ໜັງສືຄໍ້າປະກັນການປະມູນບໍ່ໃຫ້ຫຼຸດ 2% ຂອງມູນຄ່າສະເໜີ

6. ສະແດງໃຫ້ເຫັນ ເຖິງປະສົບການຜ່ານມາ 3 ປີ ຂອງບໍລິສັດ ປະກອບມີ

6.1 ປະສົບການອື່ນໆ ທົ່ວໄປ ( ສະແດງຫຼັກຖານປະສົບການແລະ ໃບຢັ້ງຢືນການປະຕິບັດວຽກສໍາເລັດ)

| ລ/ດ | ຊື່ໂຄງການ | ມູນຄ່າສັນຍາ | ມູນຄ່າປະຕິບັດໄດ້ | ໄລຍະປະຕິບັດ | ເຈົ້າຂອງໂຄງການ |
|---|---|---|---|---|---|
| | | | | | |
| | | | | | |

7. ແຜນດໍາເນີນງານຂອງໂຄງການນີ້ ຕາມໄລຍະສັນຍາຂອງຜູ້ຮັບເໝົາ;

3/

ຫົວໜ້າພະແນກ

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ
ພະແນກ ກະສິກໍາ ແລະ ສິ່ງແວດລ້ອມ
ແຂວງຈໍາປາສັກ

ປອ. ໄຊຍະສິດ ວິລະພັດ